**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ

ເລກທີ: 14/ສພທ. ທຄຕລ

ນະຄອນຫຼວງວຽງຈັນ, ວັນທີ 30/07/2019

# ມະຕິກອງປະຊຸມ
# ສະພາບໍລິຫານ ທຄຕລ ສະໄຫມສາມັນ
# ຄັ້ງທີ 3 ປະຈໍາປີ 2019, ວັນທີ 30/07/2019

ກອງປະຊຸມສະພາບໍລິຫານຂອງ ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ (ທຄຕລ) ສະໄຫມສາມັນ ຄັ້ງທີ 3 ປະຈາປີ 2019 (ຕໍ່ໄປນີ້ຮຽກວ່າ "ກອງປະຊຸມ") ໄດ້ເປີດຂຶ້ນໃນເວລາ 08:30 ໂມງ ຂອງວັນທີ 30/07/2019 ທີ່ສໍານັກງານໃຫຍ່ ທຄຕລ ໂດຍ ການເປັນປະທານຂອງ ທ່ານ ປອ. ບຸນເຫຼືອ ສິນໄຊວໍຣະວົງ, ປະທານສະພາບໍລິຫານ ທຄຕລ, ມີສະມາຊິກສະພາບໍລິ ຫານ ແລະ ຜູ້ສັງເກດການເຂົ້າຮ່ວມຕາມລາຍຊື່ຊ້ອນທ້າຍ.

**ກອງປະຊຸມ ໄດ້ປຶກສາຫາລື ແລະ ມີມະຕິຕົກລົງໃນບັນຫາສໍາຄັນຕ່າງໆ ດັ່ງນີ້:**

1. ຮັບຮອງວິທີການພິຈາລະນາຜົນການທົບທວນເອກະສານລາຍງານການເງິນ ທຄຕລ ປະຈໍາ 06 ເດືອນ 2019 ຈາກ ບໍລິສັດກວດສອບພາຍນອກ (EY) ໃຫ້ສະພາບໍລິຫານພິຈາລະນາ ຜ່ານຈົດໝາຍວຽນຫຼັງກວດສອບສໍາເລັດ.
2. ຮັບຮອງເອົາວິທີຄຸ້ມຄອງການອະນຸມັດສິນເຊື່ອໄລຍະຍາວ ຂອງ ທຄຕລ.
3. ຮັບຮອງເອົາຮ່າງນະໂຍບາຍສໍາຄັນຕ່າງໆຄື:
   - ການຄຸ້ມຄອງບໍລິຫານບັນຊີ Nostro-Vostro ຂອງ ທຄຕລ.
   - ການຄຸ້ມຄອງບັນຊີລ່ວງໜ້າ-ລໍຖ້າ ແລະ ຄ້າງຮັບ-ຄ້າງຈ່າຍດອກເບ້ຍ, ບັນຊີນອກໃບລາຍງານຖານະການເງິນ ຂອງ ທຄຕລ.
   - ການຄຸ້ມຄອງຄວາມສ່ຽງດ້ານການສໍ້ລາດບັງຫຼວງ ຂອງ ທຄຕລ.
4. ຮັບຮອງການປ່ອຍກູ້ທີ່ຂຶ້ນກັບສິດການອະນຸມັດຂອງສະພາບໍລິຫານໃຫ້ແກ່ລູກຄ້າຈໍານວນ 1 ລາຍການ.
5. ຮັບຮອງການແຕ່ງຕັ້ງຕໍາແໜ່ງງານຂັ້ນພະແນກ ຂອງ ທຄຕລ ຈໍານວນ 1 ທ່ານ.

ກອງປະຊຸມ ໄດ້ປິດລົງໃນເວລາ 12:00 ໂມງຂອງວັນດຽວກັນ.

**ປະທານສະພາບໍລິຫານ**

ປອ. ບຸນເຫຼືອ ສິນໄຊວໍຣະວົງ